INITIATIVE ON Agroecology

# ຄູ ມືການຈັດຕັ້ງປະຕິບັດ

# ລະບົບການຮຽນຮູ້ການປະຕິບັດຕົວຈິງດ້ານບົດບາດຍິງ-ຊາຍ

# Implementation Manual for Gender Action Learning System



**ສະໜັບສະໜູນໂດຍ: ໂຄງການລິເລີ່ມນິເວດກະສິກຳ**

**Supported by: CGIAR Initiative on Agroecology**

**ລຽບລຽງໂດຍ: ບຸດສະດີ ຄູນນຸວົງ, ຄຳຫລ້າ ແກ້ວວົງເພັດ, ສົມພະສິດ ດວງສະຫວັນ, ອຳມາລາ ຈັນທະລາດ ແລະ ວຽງໄຊ ໄຊດາລາ**

# ຄຳນຳ

ໃນໂລກທີ່ແມ່ຍິງ ແລະ ຜູ້ຊາຍສາມາດຮັບຮູ້ໄດ້ທ່າແຮງຂອງຕົນເອງຢ່າງເຕັມທີ່ ບໍ່ວ່າຈະເປັນໃນຂະແໜງການທາງເສດຖະກິດ, ສັງຄົມ ແລະ ການເມືອງ. ມີອິດສະລະພາບຈາກທຸກຮູບການການຈຳແນກເພື່ອສ້າງຄວາມເຂັ້ມແຂງໃຫ້ກັບຕົນເອງ, ຄອບຄົວ, ຊຸມຊົນ ແລະ ໂລກ

ຄູ່ມືສະບັບນີ້ນຳສະເໜີ ພາກທຳອິດຂອງ ລະບົບຮຽນຮູ້ການປະຕິບັດຕົວຈິງດ້ານບົດບາດຍິງ-ຊາຍແມ່ນ: ແຮງກະຕຸ້ນ; ໂດຍອີງໃສ່ປະສົບການຂອງແຜນງານ WEMAN, ອົງການ ອ໋ອກຟາມໂນວິບ ທີ່ໄດ້ສະໜັບສະໜູນຈາກບັນດາຄູ່ຮ່ວມງານຕ່າງໆ.

ປື້ມດັ່ງກ່າວນີ້ ແມ່ນການຮວມບຮວມ ເຄື່ອງມືຈາກ ຫລາກຫລາຍແຫລ່ງທັງ ຈາກປື້ມຄູ່ມືຂອງຄູ່ຮ່ວມງານອົງການ ອ໊ອກສະຟາມທີ່ໄດ້ພັດທະນາໄປແລ້ວ ແລະ ບົດລາຍງານຈາກຫລາກຫລາຍຝຶກອົບບຮົມ ເພື່ອເປັນບ່ອນອີງໃນເວລາ ຈັດອົບຮົມຂອງ ບັນດາຄູຝຶກ.

ຄູ່ມືນີ້ ເຫມາະສຳຫລັບ ຜູ້ທີ່ມີຄວາມສົນໃຈໃນການນຳໃຊ້ ວິທີການຝຶກອົບຮົມ ແບບ Gender Action Learning System ຫລື ລະບົບປະຕິບັດການຕົວຈິງດ້ານ ບົດບາດຍິງ-ຊາຍ ທີ່ຈະເອົາໄປນຳໃຊ້ຕົວຈິງໃນຊຸມຊົນ ເພື່ອເຮັດໃຫ້ຊຸມຊົນສາມາດວິເຄາະບັນຫາ, ສິ່ງທ້າທາຍທີ່ກ່ຽວຂ້ອງ ແລະ ວິທີແກ້ໄຂ ພ້ອມທັງນຳເອົາວິທີແກ້ໄຂໄປສ້າງເປັນແຜນກິດຈະກຳເພື່ອພັດທະນາຕົນເອງ, ພັດທະນາຄອບຄົວ, ພັດທະນາຊຸມຊົນ ໂດຍການມີສ່ວນຮ່ວມຂອງທຸກເພດ ທຸກໄວ.

ເຄື່ອງມືຢູ່ໃນຄູ່ມືດັ່ງກ່າວນີ້ ແມ່ນສ້າງຂຶ້ນ ເພື່ອແລກປ່ຽນບົດຮຽນ ແລະ ບໍ່ໄດ້ຈັດທຳຂຶ້ນເພື່ອການຄ້າໃດໆ.

# ສາລະບານ


ໜ້າ

I. ອະທິບາຍຄວາມໝາຍ 4

1.1 ການຝຶກອົບຮົມ ໝາຍເຖິງ 4

1.2 ຜູ້ອຳນວຍຄວາມສະດວກ ໝາຍເຖິງ 4

1.3 ເພື່ອນສອນເພື່ອນ ໝາຍເຖິງ 4

II. ລະບົບການຮຽນຮູ້ການປະຕິບັດໂຕຈິງ ດ້ານບົດບາດຍິງ-ຊາຍ 4

2.1 ຄວາມເປັນມາ 4

2.2 ນິຍາມ 5

2.3 ຈຸດປະສົງ 5

2.4 ຜູ້ນຳໃຊ້ 5

2.5 ສັງລວມຫຍໍ້ເຄື່ອງມືຕ່າງໆ ໃນລະບົບການຮຽນຮູ້ການປະຕິບັດໂຕຈິງ ດ້ານບົດບາດຍິງ-ຊາຍ6

III. ຂັ້ນຕອນ ແລະວິທີການນຳໃຊ້ເຄື່ອງມື 7

3.1 ກິດຈະກຳແນະນຳໂຕ 8

3.2 ເຄື່ອງມືເພັດ 8

3.3 ເຄື່ອງມືຕົ້ນໄມ້ຍຸດທະສາດ 15

3.4 ເຄື່ອງມືຕົ້ນໄມ້ດຸ່ນດ່ຽງ 18

3.5 ເຄື່ອງມືແຜນວາດສາຍພົວພັນພະລັງທາງສັງຄົມ 22

3.6 ເຄື່ອງມືເສັ້ນທາງສູ່ຄວາມຝັນ/ເປົ້າໝາຍ 26

3.7 ເຄື່ອງມືເສັ້ນທາງໃຫຍ່ຫຼາຍເສັ້ນເພື່ອບັນລຸເປົ້າໝາຍ 31

IV. ເອກະສານຊ້ອນທ້າຍ 33

# I. ອະທິບາຍຄວາມໝາຍ

### *1.1ການຝຶກອົບຮົມ (Training )*

ໝາຍເຖິງການຮຽນຮູ້ໂດຍຜ່ານການແລກປ່ຽນຄວາມຮູ້ ແລະປະສົບການຈາກຄູຝຶກ, ຈາກໝູ່ເພື່ອນ ຫຼືຈາກຜູ້ເຂົ້າຮ່ວມດ້ວຍກັນແບບມີສ່ວນຮ່ວມ ເຊິ່ງຜ່ານການປະຕິບັດຕົວຈິງຮ່ວມກັນໃນໄລຍະໃດໜຶ່ງ.

### 1.2 *ຄວາມໝາຍຂອງຄູຝຶກ/ຜູ້ອຳນວຍຄວາມສະດວກ (Trainer/ Facilitator)*

ແມ່ນ: ເປັນຜູ້ມີບົດບາດໃນການຖ່າຍທອດຄວາມຮູ້/ຄວາມສາມາດ, ລະດົມແນວຄວາມຄິດ ແລະສ້າງຄວາມເຂົ້າໃຈ ໃຫ້ຜູ້ເຂົ້າຮ່ວມຝຶກອົບຮົມ ເກີດການຮຽນຮູ້, ມີຄວາມຮູ້ໃໝ່ ແລະພ້ອມທີ່ຈະປ່ຽນແປງພຶດຕິກຳໃນການປະຕິບັດວຽກງານ ແລະການດຳລົງຊີວິດປະຈຳວັນໃຫ້ດີຂຶ້ນ.

1.3 ***ເພື່ອນສອນເພື່ອນ (Peer Learning )*** ໝາຍເຖິງການຖ່າຍທອດຄວາມຮູ້ ແລະທັກສະຕ່າງໆທີ່ຕົນເອງໄດ້ຮຽນ/ຝຶກມາແລ້ວໃຫ້ເພື່ອນລຸ້ນດຽວກັນ, ຊຸມຊົນດຽວກັນ ເພື່ອໃຫ້ເກີດການຮຽນຮູ້ ແລະແລະປ່ຽນປະສົບການຕ່າງໆຈາກບຸກຄົນໜຶ່ງ ຫາອີກບຸກຄົນໜຶ່ງແບບຕົວຕໍ່ຕົວ.

# II. ລະບົບການຮຽນຮູ້ການປະຕິບັດໂຕຈິງ ດ້ານບົດບາດຍິງ-ຊາຍ

## 2.1 ຄວາມເປັນມາ

ຄວາມບໍ່ສະເໝີພາບບົດບາດຍິງ-ຊາຍມັນບໍ່ແມ່ນບັນຫາສະເພາະແຕ່ແມ່ຍິງ, ແຕ່ມັນຍັງເປັນສາເຫດຫຼັກຕໍ່ຜົນຜລິດທີ່ຕ່ຳ, ຄຸນນະພາບການຜລິດຕ່ຳໃນພາກກະສິກຳ. ນີ້ຄືຄຳອະທິບາຍບາງຕົວຢ່າງໃນກຸ່ມແມ່ຍິງ ແລະຜູ້ຊາຍທີ່ເຮັດການຜລິດ, ຜູ້ທີ່ເຮັດວຽກກຳມະກອນ, ພໍ່ຄ້າຊາວຂາຍໃນສະຫະກອນກາເຟ, ການແປຮູບເພີ່ມມູນຄ່າຕາມກົນໄກຕະຫຼາດພືດຜົນການຜລິດຢູ່ປະເທດອູການດາພາຍຫຼັງທີ່ໄດ້ປະຕິບັດ GALs ໃນຂັ້ນຕອນທີສາມກໍ່ຄືການວິເຄາະບົດບາດຍິງ-ຊາຍແບບມີສ່ວນຮ່ວມ. ສຳລັບອົງການອອກຟາມໂນວິບແລ້ວ ໂຄງການ WEMAN ເປັນໂຄງການຮ່ວມກັນກັບອົງການ ອີຟັດ ພາຍໃຕ້ຊື່ ລະບົບການປະຕິບັດຕົວຈິງດ້ານບົດບາດຍິງ-ຊາຍ (GALs) ເຊິ່ງປັບປຸງຈາກການພັດທະນາມູນຄ່າຕາມກົນໄກການຕະຫຼາດ ຮ່ວມກັບອົງການຄູ່ຮ່ວມງານທ້ອງຖິ່ນ ແລະຊຸ່ງວຊານ ຊື່ທ່ານນາງ Linda Mayoux ທີ່ປະເທດ ອູການດາ ໃນປີ 2009-2011.

GALS ແມ່ນຂະບວນການໜຶ່ງໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ຄື: 1. ການວາງແຜນຊີວິດຕົນເອງ ແລະຊີວິດການເປັນຢູ່, 2. ການຈັດຕັ້ງປະຕິບັດເພື່ອໃຫ້ເກີດການປ່ຽນແປງດ້ານບົດບາດຍິງ-ຊາຍຮ່ວມກັນໃນຊຸມຊົນ, 3. ສະຖາບັນ ຫຼືອົງການຈັດຕັ້ງຕ່າງໆໃນຊຸມຊົນໄດ້ມີຈິດສຳນຶກ ແລະປ່ຽນແປງສາຍພົວພັນທາງດ້ານອຳນາດເປັນການໃຫ້ບໍລິການ ທັງໃນພາກທຸລະກິດ ແລະພາກລັດຕ່າງໆ ໂດຍການນຳໃຊ້ ເຄື່ອງມື GALS

ຢູ່ປະເທດລາວ, ອົງການອອກຟາມໄດ້ເຊີນຕົວແທນອົງການຈັດຕັ້ງທາງສັງຄົມເຂົ້າຮ່ວມຝຶກອົບຮົມ GALS ໃນປີ 2009 ແລະໄດ້ນຳໃຊ້ເຄື່ອງມື ນີ້ເຂົ້າໃນວຽກງານເພີ່ມມູນຄ່າຕາມກົນໄກການຕະຫຼາດໄມ້ປ່ອງໃນປີ 2012, ແລະໄດ້ຮັບທຶນຈາກອອກຟາມໂນວິບ ເປັນເວລາສອງ ປີ 2013-2015 ເພື່ອເຮັດວຽກນີ້ກັບບັນດາອົງການຄູ່ຮ່ວມງານຄື: MHP, Camkid, Sisterhood and GDA. ພາຍໃຕ້ໂຄງການນີ້, ພວກເຮົາໄດ້ຈັດຝອກອົບຮົມ, ສຳມະນາຮ່ວມກັນໃນລະດັບພື້ນທີ່ແຂວງບໍ່ແກ້ວໃນເດືອນພະຈິກ ປີ 2014, ແລະຈັດຝຶກຂັ້ນຕອນທີສອງຄື ການຮຽນຮູ້ຂອງຊຸມຊົນ ໃນທ້າຍເດືອນ 6 ຫາຕົ້ນເດືອນ 7 ປີ 2015 ທີ່ແຂວງບໍ່ແກ້ວເຊັ່ນກັນ.

ໃນໄລຍະ ປີ 2016-2019 ທາງສະມາຄົມແມ່ຍິງຮ່ວມໃຈພັດທະນາ (MHP) ແລະສະມາຄົມຄຳຄິດ (CAMKID) ກໍ່ໄດ້ສືບຕໍ່ນຳໃຊ້ເຄື່ອງມື ແກວ/GALs ເຂົ້າໄປໃນວຽກຂອງສະມາຄົມ ລວມທັງໄດ້ສ້າງຄູ່ມືແກວສຳລັບພະນັກງານ ແລະຄູຝຶກຂັ້ນບ້ານໄດ້ນຳເອົາໄປໃຊ້ໃນພື້ນທີ່ຂອງຕົນ.

ເຊິ່ງຄູ່ມືສະບັບນີ້ແມ່ນພັດທະນາມາຈາກຄູ່ມືຫຼາຍໆບ່ອນ ລວມທັງບົດຮຽນຕົວຈິງທີ່ທາງສອງສະມາຄົມ ແລະຄູຝຶກຂັ້ນບ້ານໄດ້ມາຮ່ວມກັນຖອດຖອນບົດຮຽນໃນຄັ້ງວັນທີ 8-12 ເດືອນກໍລະກົດ ປີ 2019 ທີ່ຜ່ານມານັ້ນ ຈົນເຖິງປະຈຸບັນນີ້.

## 2.2 ນິຍາມ

***ລະບົບການຮຽນຮູ້ການປະຕິບັດໂຕຈິງ ດ້ານບົດບາດຍິງ-ຊາຍ (GALs) ແມ່ນຫຍັງ?***

Gender Action Learning System (GALs)/ ລະບົບການຮຽນຮູ້ການປະຕິບັດໂຕຈິງ ດ້ານບົດບາດຍິງ-ຊາຍ ແມ່ນວິທີການສ້າງຄວາມເຂັ້ມແຂງນຳພາໂດຍຊຸມຊົນ ຊຶ່ງມີເປົ້າໝາຍສະໜັບສະໜູນທັງຍິງ ແລະ ຊາຍ ເຊິ່ງເຂົາເຈົ້າສາມາດຄວບຄຸມການດຳລົງຊີວິດຂອງເຂົາເຈົ້າໄດ້ຫຼາຍຂຶ້ນ, ແລະ ລວມເຖິງສະໜັບສະໜູນການເຄື່ອນໄຫວທີ່ມີຄວາມຍືນຍົງ ເພື່ອຄວາມຍຸດຕິທຳຂອງຍິງ ແລະ ຊາຍ.

## 2.3 ຈຸດປະສົງ

- ເພື່ອປູກຈິດສຳນຶກດ້ານບົດບາດຍິງ-ຊາຍ ພ້ອມທັງຊ່ວຍວິເຄາະຄວາມ ສຸກ ຫຼື ຄວາມທຸກໃນຄອບຄົວ ແລະ ຊຸມຊົນ.
- ເພື່ອຊ່ວຍໃນການວາງແຜນຍຸດທະສາດຂອງການສ້າງເສດຖະກິດຄອບຄົວ ແລະ ຊຸມຊົນ ເຊິ່ງເຮັດໃຫ້ເກີດມີແຜນກິດຈະກຳໃນການພັດທະນາ.
- ເພື່ອຊ່ວຍໃຫ້ຍິງ-ຊາຍ ເຂົ້າໃຈໃນການແບ່ງປັນພາລະໜ້າວຽກ ຊ່ວຍເຫຼືອເຊິ່ງກັນ ແລະ ກັນພາຍໃນຄອບຄົວ ແລະ ຊຸມຊົນໃຫ້ເກີດມີຄວາມສາມັກຄີ ຄວາມສະຫງົບສຸກໃນຄອບຄົວ, ຊຸມຊົນ ແລະ ຮູ້ຈັກນຳໃຊ້ເຄື່ອງມື *ລະບົບການຮຽນຮູ້ການປະຕິບັດໂຕຈິງດ້ານບົດບາດຍິງ-ຊາຍ* ເຂົ້າໄປພັດທະນາຊີວິດການເປັນຢູ່ໃຫ້ດີຂຶ້ນ.

## 2.4 ຜູ້ນຳໃຊ້

- ຄູຝຶກ
- ຜູ້ອຳນວຍຄວາມສະດວກ
- ປະຊາຊົນຢູ່ໃນຊຸມຊົນ
- ນັກຮຽນ ນັກສຶກສາ
- ອາສາສະໝັກ
- ບຸກຄົນທົ່ວໄປ ທີ່ມີຄວາມສົນໃຈ

## 2.5 ສັງລວມຫຍໍ້ເຄື່ອງມືຕ່າງໆ ໃນລະບົບການຮຽນຮູ້ການປະຕິບັດໂຕຈິງ ດ້ານບົດບາດຍິງ-ຊາຍ

<table>
<tr>
<td></td>
<td>
1.<u>ເຄື່ອງມືເພັດ</u><br><br>
ເປັນເຄື່ອງມືວິເຄາະຕົວຕົນຂອງຕົນເອງ (ຍິງ, ຊາຍ) ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຮຽນຮູ້ການຕັ້ງຄຳຖາມເລີ່ມຈາກຕົນເອງ, ການແລກປ່ຽນຮຽນຮູ້ກັບຄົນອື່ນ ແລະການທຳຄວາມເຂົ້າໃຈບັນຫາທີ່ມີຄວາມຄືກັນ ແລະຕ່າງກັນໃນສັງຄົມ ແລ້ວຮ່ວມກັນຈັດບຸລິມະສິດໃນການແກ້ໄຂບັນຫາ.
</td>
</tr>
<tr>
<td></td>
<td>
2. <u>ເຄື່ອງມືຕົ້ນໄມ້ຍຸດທະສາດ</u><br>
ໃຊ້ເພື່ອການວິເຄາະບັນຫາ:<br>
- ລຳຕົ້ນ ຄືບັນຫາທີ່ພົບເຫັນ<br>
- ຮາກ ປຽບເໝືອນສາເຫດ ທີ່ກໍ່ໃຫ້ເກີດບັນຫາ<br>
- ກິ່ງ/ງ່າ ຄືວິທີແກ້ໄຂ<br>
- ໝາກ ຄືຜົນຂອງການແກ້ໄຂ
</td>
</tr>
<tr>
<td></td>
<td>
3. <u>ເຄື່ອງມືຕົ້ນໄມ້ດຸນດ່ຽງ</u><br><br>
- ລຳຕົ້ນ ຄືບັນຫາທີ່ພົບເຫັນ<br>
- ຮາກ ປຽບເໝືອນລາຍຮັບ, ແຮງງານ, ຜູ້ທີ່ມີສິດໃນການຕັດສິນໃຈ, ຜູ້ທີ່ມີຜູ້ທີ່ມີສິດຄຸ້ມຄອງ<br>
- ກິ່ງ/ງ່າ ຄືລາຍຈ່າຍ/ ວິທີແກ້ໄຂ/ວິທີການປັບປຸງ, ປ່ຽນແປງ<br>
- ໝາກ ຄືຜົນຂອງການແກ້ໄຂ<br><br>
(ຕົ້ນໄມ້ດຸ່ນດ່ຽງ ໃຊ້ໃນການວິເຄາະລາຍຮັບ-ລາຍຈ່າຍ, ການຕັດສິນໃຈ, ການແບ່ງງານ, ສິດໃນການນຳໃຊ້ຊັບສິນ ເຊິ່ງຍັງເຫັນວ່າຍັງບໍ່ມີຄວາມສະເໝີພາບກັນລະຫວ່າງຍິງຊາຍໃນລະດັບຄອບຄົວ, ຊຸມຊົນ ແລະສັງຄົມ)<br><br>
<u>ສິດໃນການນຳໃຊ້ຊັບສິນ.</u>     <u>ການຕັດສິນໃຈ.</u><br>
• ຍິງ     ຍິງ<br>
• ຊາຍ     ຊາຍ
</td>
</tr>
</table>

| | |
|---|---|
|  | **4. <u>ແຜນອາດພະລັງທາງສັງຄົມ</u>**<br>ໃຊ້ເພື່ອວິເຄາະໂອກາດ ແລະສິ່ງທ້າທາຍ ເຊິ່ງມີສາຍພົວພັນກ່ຽວກັບຄວາມຮັກ/ຄວາມຜູກພັນ, ສາຍພົວພັນທາງດ້ານເສດຖະກິດ/ການເງິນ ແລະສາຍພົວພັນທາງດ້ານອຳນາດ.<br>- ຄຳຖາມທຳອິດຄື: ຂ້ອຍແມ່ນໃຜ (ຍິງ, ຊາຍ, ເດັກນ້ອຍ, ຜູ້ສູງອາຍຸ, ຄົນພິການ ...)<br>- ຂ້ອຍມີສາຍພົວພັນກັບໃຜແດ່?ມີຄວາມຜູກພັກກັບຫຍັງແດ່? |
|  | **5. <u>ເສັ້ນທາງໄປສູ່ເປົ້າໝາຍ</u>**<br>ແມ່ນເຄື່ອງມືທີ່ກຳນົດແຜນໃນການຈັດຕັ້ງປະຕິບັດໂດຍອີງໃສ່ວິທີການແກ້ໄຂທີ່ໄດ້ວິເຄາະໃນຕົ້ນໄມ້ຍຸດທະສາດ/ຕົ້ນໄມ້ດຸ່ນດ່ຽງ, ນອກນັ້ນກໍ່ຍັງເຊື່ອມໂຍງທັງແຜນອາດທາງສັງຄົມນຳອີກ. ການສ້າງແຜນອາດເສັ້ນທາງສູ່ເປົ້າໝາຍ/ຄວາມຝັນນັ້ນ ຕ້ອງໄດ້ກຳນົດເວລາຈະແຈ້ງ ( ຈາກປີໃດຫາປີໃດ?/ຫຼືຈາກເດືອນໃດຫາເດືອນໃດ?), ສາມາດເຮັດໄດ້ແທ້, ແລະມີຕົວຊີ້ວັດທີ່ຊັດເຈນ. ນອກນັ້ນ, ຍັງໄດ້ຄຳນຶງເຖິງໂອກາດ ແລະທ່າແຮງທີ່ເຮົາມີ, ໃນຂະນະດຽວກັນກໍ່ຕ້ອງໄດ້ຄຳນຶງເຖິງຄວາມສ່ຽງ ຫຼື ອຸປະສັກທີ່ຈະເກີດຂຶ້ນໃນໄລຍະປະຕິບັດແຜນດັ່ງກ່າວ. |

# 3 ເຄື່ອງມື ການນຳໃຊ້ລະບົບການຮຽນຮູ້ການປະຕິບັດໂຕຈິງ ດ້ານບົດບາດຍິງ-ຊາຍ

## *3.1 ກິດຈະກຳແນະນຳຕົວ*

**ວັດຖຸປະສົງ**: ຜູ້ເຂົ້າຮ່ວມ ຮູ້ຈັກກັນ ແລະ ກັນ ແລະ ຮູ້ສຶກຄຸ້ນເຄີຍກັບວິທີການຫລັກ ຂອງ GALs ຄືການແຕ້ມຮູບ ແລະການສ້າງຄວາມຄາດຫວັງຂອງແຕ່ລະຄົນ

**ເວລາ**: 30 ນາທີ

**ວິທີການ**:

1) ໃຫ້ຜູ້ເຂົ້າຮ່ວມ ແຕ້ມຮູບເພື່ອທີ່ຈະແນະນຳຕົວ
2) ຮູບທີ່ຈະແຕ້ມແມ່ນສັນຍາລັກບົ່ງບອກຄວາມເປັນຕົວຕົນຂອງຕົນເອງ (ຄວາມຫມາຍ ຂອງຊື່ ) ຫຼືສາມາດແຕ້ມ ສິ່ງທີ່ຕົນເອງມັກ.

3) ໃຫ້ແຕ່ລະຄົນຈັບກຸ່ມ ກັບຄົນທີ່ມີສັນຍາລັກ ຄ້າຍຄືກັນ
4) ແລະໃຫ້ແຕ່ລະຄົນ ແລກປ່ຽນກັນໃນກຸ່ມຄື: ຄວາມໝາຍຂອງສັນຍາລັກ ແລະ ຄວາມຄາດຫວັງຂອງຕົນເອງໃນການມາຝຶກອົບຮົມນີ້ ໃນເວລາ 5 ເຖິງ 10 ນາທີ ຫລື ແລ້ວແຕ່ ຈໍານວນຄົນຂອງແຕ່ລະກຸ່ມ
5) ຫລັງຈາກນັ້ນໃຫ້ແຕ່ລະກຸ່ມເລືອກ ຜູ້ຕາງຫນ້າຂຶ້ນນໍາສະເຫນີ ຕໍ່ກຸ່ມໃຫຍ່

**ອຸປະກອນ**: ເຈ້ຍ Post it ຫຼືເຈ້ຍສີ, ສີທຽນ ອາດຈະແມ່ນສີພາສເທລ Pastels







**ສິ່ງທີ່ຄູຝຶກຄວນຄໍານຶງ**:

- ຕ້ອງແນ່ໃຈວ່າກິດຈະກໍາ ຫຼືເກມທີ່ນໍາໃຊ້ມີຄວາມແທດເໝາະກັບນັກສໍາມະນາກອນ
- ກິດຈະກໍານີ້ແມ່ນເລີ່ມຈາກການຈັບຄູ່ ແລະຣວມກັນເປັນກຸ່ມໃຫຍ່ເພື່ອເຮັດໃຫ້ນັກສໍາມະນາກອນຮູ້ສຶກສະບາຍໃຈ ແລະເປີດໃຈຫຼາຍຂຶ້ນຕາມລໍາດັບ
- ຄວາມຄາດຫວັງໃນການອົບຮົມສາມາດແບ່ງອອກເປັນ 3 ລະດັບ ໄດ້ແກ່ ຜົນທີ່ເກີດຂຶ້ນທັນທີຫຼັງ ຈາກການ ຝຶກອົບຮົມ (Output) ຜົນສືບເນື່ອງ (Outcome) ແລະຜົນກະທົບ (Impact)
- ພະຍາຍາມໃຫ້ຜູ້ເຂົ້າຮ່ວມແຕ້ມເປັນສັນຍາລັກ ຫລື ຮູບ (ແນະນໍາບອກວ່າບໍ່ມີຜິດບໍ່ມີຖືກ)

## *3.5 ເຄື່ອງມືເພັດ (Diamond Dream)*

- **ນິຍາມ:**

  ເຄື່ອງມືຮູບເພັດ ເປັນເຄື່ອງມືວິເຄາະຄວາມສະເໝີພາບບົດບາດຍິງ-ຊາຍຢູ່ໃນຄອບຄົວ, ຊຸມຊົນ ເຊິ່ງມັນມີຄວາມສໍາຄັນຕໍ່ຜົນສໍາເລັດຂອງການວາງແຜນຍຸດທະສາດ, ລວມທັງວິເຄາະເຖິງການປ່ຽນແປງບົດບາດຂອງເພດຍິງ ແລະເພດຊາຍໃນອະນາຄົດ ເພື່ອທັງສອງເພດໄດ້ຮັບໂອກາດທີ່ເທົ່າທຽມກັນ.

- **ຈຸດປະສົງ:**

  ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຮຽນຮູ້ພື້ນຖານການພົວພັນກັນລະຫວ່າງ ຍິງ-ຊາຍ ໂດຍການເລີ່ມຕົ້ນທີ່ຖາມຕົນເອງວ່າ: ມີຫຍັງແດ່ທີ່ຕົນເອງພູມໃຈ/ມັກໃນຄວາມເປັນຍິງ ຫຼືເປັນຊາຍ, ແລະ ມີຫຍັງທີ່ຕົນເອງບໍ່ພູມໃຈ/ບໍ່ມັກໃນຄວາມເປັນຍິງ ຫຼືຊາຍ. ເຊິ່ງສິ່ງທີ່ພູມໃຈ ແລະບໍ່ພູມໃຈນັ້ນຜູ້ເຂົ້າຮ່ວມຈະເຫັນໄດ້ວ່າມີທັງເພດ ແລະບົດບາດຂອງຍິງ ແລະຂອງຊາຍທີ່ມີການພົວພັນກັນໃນຄອບຄົວ, ຊຸມຊົນ ແລະສັງຄົມ.

- **ເໝາະສົມສຳລັບນຳໃຊ້ວິເຄາະກ່ຽວກັບ:**

  - ຄວາມສະເໝີພາບບົດບາດຍິງ-ຊາຍ ໃນການຕັດສິນໃຈ
  - ພາລະບົດບາດ ແລະການແບ່ງງານໃນຄອບຄົວ, ຊຸມຊົນ ແລະສັງຄົມ
  - ສິດສະເໝີພາບໃນການເຮັດວຽກ ແລະພັກຜ່ອນ
  - ສິດສະເໝີພາບໃນການສືບມູນມໍລະດົກ.

- **ເວລາ:**
  120 ນາທີ  (ອະທິບາຍ, ລະດົມສະໝອງ ແລະແຕ້ມຮູບ 30 ນາທີ, ແລກປ່ຽນເປັນຄູ່ ແລະແລະປ່ຽນໃນກຸ່ມຍ່ອຍ 30 ນາທີ, ແລກປ່ຽນໃນກຸ່ມໃຫຍ່ 15 ນາທີ, ຈັດບຸລິມະສິດບັນຫາທີ່ພົບເຫັນເພື່ອນຳໄປວິເຄາະ 30 ນາທີ, ສະຫຼຸບຜົນອອກຂອງເຄື່ອງມືເພັດ 15 ນາທີ

- **ຂັ້ນຕອນ ແລະ ວິທີການນຳໃຊ້**



❖ ຂັ້ນຕອນທີ 1

ອະທິບາຍຄວາມໝາຍຂອງເຄື່ອງມືເພັດ, ເຊິ່ງເອີ້ນວ່າເພັດກໍ່ຍ້ອນວ່າເພັດເປັນເປັນວັດຖຸທີ່ມີຄ່າ ແລະລາຄາແພງທີ່ສຸດ, ຫຼັງຈາະນັ້ນຮ້ອງອາສາສະໝັກຍິງ 1 ຄົນ, ຊາຍ 1 ຄົນ ອອກມາແຕ້ມຮູບເພັດເພື່ອເປັນຕົວຢ່າງ ແລ້ວຜູ້ອຳນວຍຄວາມສະດວກປະກອບສົມທົບດັດແປງຮູບເພັດໃຫ້ສົມບູນ




❖ ຂັ້ນຕອນທີ 2:

ແບ່ງກຸ່ມອອກເປັນ 2 ກຸ່ມ(ກຸ່ມຍິງ, ກຸ່ມຊາຍ) ແລ້ວອະທິບາຍວິທີການແຕ້ມ ແລະ ຕິດຮູບ.




❖ ຂັ້ນຕອນທີ 3

ແຕ່ລະຄົນແຕ້ມສິ່ງທີ່ຕົນເອງພູມໃຈ/ມັກ ໃນຄວາມເປັນຍິງ/ຊາຍ( 2-3 ຮູບ ແຕ່ລະຮູບໃຫ້ມີຄວາມໝາຍສາມາດອະທິບາຍໄດ້) ຫຼັງຈາກນັ້ນ ແຕ້ມສິ່ງທີ່ກົງກັນຂ້າມ ຄືສິ່ງທີ່ຕົນເອງບໍ່ພູມໃຈ/ບໍ່ມັກໃນຄວາມເປັນຍິງ/ຊາຍ ( 2-3 ຮູບ ແຕ່ລະຮູບໃຫ້ມີຄວາມໝາຍສາມາດອະທິບາຍໄດ້)



***ຂໍ້ຄວນຄຳນຶງສຳລັບຄູຝຶກຄື: ຄວນແຍກສີຂອງເຈ້ຍສຳລັບກຸ່ມຍິງ/ຊາຍ ແລະແຍກສີທີ່ພູມໃຈ/ມັກ ແລະສີທີ່ບໍ່ພູມໃຈ/ບໍ່ມັກ**

- ຂັ້ນຕອນທີ 4

  ແນະນຳຜູ້ເຂົ້າຮ່ວມໃນກຸ່ມຍິງ/ຊາຍຈັບຄູ່ກັນແລ້ວແລກປ່ຽນກັນວ່າຕົນເອງແຕ້ມນັ້ນມີຄວາມໝາຍຫຍັງແດ່?



- ຂັ້ນຕອນທີ 5

  ແລກປ່ຽນກັນໃນກຸ່ມຍິງ-ກຸ່ມຊາຍ ພ້ອມທັງຈັດເປັນໝວດໝູ່ສິ່ງທີ່ພູມໃຈ ແລະບໍ່ພູມໃຈ ແລ້ວເອົາກະພາບກັນວ່າໂຕໃດໃນກຸ່ມມີຄວາມພູມໃຈຄືກັນ ແລ້ວຕິດຢູ່ເທິງສຸດ ແລ້ວໂຕໃດທີ່ຄົນໃນກຸ່ມເຫັນດີວ່າບໍ່ພູມໃຈຫຼາຍ ແມ່ນນຳມາຕິດຢູ່ລຸ່ມສຸດ



❖ ຂັ້ນຕອນທີ 6

ຄັດເລືອກຕົວແທນຈາກກຸ່ມຍິງ ແລະກຸ່ມຊາຍອອກມານຳສະເໜີແລກປ່ຽນໃນກຸ່ມໃຫຍ່

 

❖ ຂັ້ນຕອນທີ 7

ແນະນຳຕົວແທນທັງສອງກຸ່ມຍ້າຍຮູບທີ່ແຕ້ມນັ້ນເຂົ້າມາໃສ່ໃນຮູບເພັດລວມ ເຊິ່ງຈະໄດ້ລວບລວມເອົາແນວຄວາມຄິດຂອງເພດຍິງ/ຊາຍເຂົ້າຮ່ວມກັນ



❖ ຂັ້ນຕອນທີ 8

ຄູຝຶກອະທິບາຍ ສິ່ງທີ່ແມ່ຍິງ ແລະຜູ້ຊາຍພູມໃຈ/ບໍ່ພູມໃຈຄືກັນ ຫຼືຕ່າງກັນຄືແນວໃດ? ແລ້ວອະທິບາຍອັນໃດແມ່ນເພດ ແລະບົດບາດ ແລ້ວຖ້າຢາກປ່ຽນແປງເຮົາຈະປ່ຽນແປງຫຍັງແດ່ ໂດຍອີງໃສ່ນິຍາມ:

<u>ເພດ: </u>ແມ່ນທຳມະຊາດສ້າງໃຫ້ແມ່ຍິງ ແລະຜູ້ຊາຍເປັນມະນຸດຄືກັນ ແລະເປັນເພດຕ່າງກັນ, ເຊິ່ງບໍ່ສາມາດປ່ຽນແປງໄດ້ (Not changeable)

<u>ບົດບາດຂອງແມ່ຍິງ ແລະຜູ້ຊາຍ:</u> ແມ່ນສັງຄົມກຳນົດໃຫ້ແມ່ຍິງ ແລະຜູ້ຊາຍມີສັກສີ, ມີບົດບາດໃນສັງຄົມທີ່ບໍ່ຄືກັນ ແລະປະຕິບັດແຕກຕ່າງກັນໃນແຕ່ລະທ້ອງຖິ່ນ, ໃຕແຕ່ລະສັງຄົມຂອງແຕ່ລະປະເທດ ແລະສາມາດປ່ຽນແປງໄດ້ (Changeable)




❖ ຂັ້ນຕອນທີ 9

ເພື່ອຄວາມເປັນເອກະພາບ ແມ່ນສະເໜີໃຫ້ຜູ້ເຂົ້າຮ່ວມທັງຍິງ ແລະຊາຍພາກັນຈັດບຸລິມະສິດ ໂດຍການໂຫວດແບບໃຊ້ເຈ້ຍສີທີ່ແຕກຕ່າງກັນ

ເອົາສະຕິກເກີ ເພື່ອຫມາຍໃສ່ ໃຫ້ຜູ້ເຂົ້າຮ່ວມ ປະມານ 3 ຫາ 5 ອັນ ຫລື ແລ້ວແຕ່ຫົວຂໍ້ຂອງບັນຫາ ຫລື ຂຶ້ນກັບຄູຝຶກ ວ່າຢາກໃຫ້ຜູ້ເຂົ້າຮ່ວມ  ແຕ່ສະຕິກເກີແມ່ນຕ້ອງແມ່ນ ຄົນລະສີ ທີ່ໃຫ້ຜູ້ຊາຍ ແລະ ແມ່ຍິງ

| ບັນຫາ ຫລື ຫົວຂໍ້ | ແມ່ຍິງ | ຜູ້ຊາຍ | ທັງສອງ ( ທັງຫມົດ) |
|---|---|---|---|
| ບັນຫາ1 | ຈຳນວນ | ຈຳນວນ | ລວມທັງຍິງ ແລະ ຊາຍ |
| ບັນຫາ 2 | | | |
| ບັນຫາ 3 | | | |
| ບັນຫາ 4 | | | |
| | | | |




| ຫລັງຈາກ ຈັດບູລິມະ ສິດ | ຕົວຢ່າງບັນຫາ |
|---|---|
| 1 | ການໃຊ້ຄວາມຮູນແຮງຕໍ່ແມ່ຍິງໃນ ຄອບຄົວ |
| 2 | ແມ່ຍິງຖືກຂົ່ມຂືນ |
| 3 | ເອື້ອຍອີງວຽກຫລາຍເກີນໄປສຳລັບຜູ້ ຊາຍ |

- ສິ່ງທີ່ຄູຝຶກຄວນຄຳນຶງ:

- ຜູ້ເຂົ້າຮ່ວມທັງຍິງ ແລະ ຊາຍຄວນມີ ຈຳນວນເທົ່າກັນ ເພື່ອບໍ່ໃຫ້ແຕກໂຕນທາງດ້ານຈຳນວນຫລາຍ
- ເປັນການປູກຈິດສຳນຶກໃຫ້ຜູ້ເຂົ້າຮ່ວມເກີດການປ່ຽນແປງທາງດ້ານພຶດຕິກຳ
- ເພັດແມ່ນເຄື່ອງປະດັບທີ່ມີລາຄາສູງສຸດກວ່າເຄື່ອງປະດັບອັນອື່ນໆ
- ເພັດທີ່ໄດ້ຜ່ານການເຈຍລະໄນແລ້ວຈະມີສີສັນທີ່ງົດງາມແລະມີລາຄາແພງ
- ເພັດທີ່ບໍ່ທັນໄດ້ເຈຍລະໄນເບິ່ງແລ້ວມັນຈະບໍ່ມີສີສັນງົດງາມ ແລະ ບໍ່ມີລາຄາແພງປານໃດ
- ຖ້າທຽບໃສ່ຄົນເຮົາຜູ້ທີ່ໄດ້ຜ່ານການຝຶກຝົນຫຼໍ່ຫຼອມຕົນເອງແລ້ວກໍ່ຈະເຮັດໃຫ້ຄົນຜູ້ນັ້ນມີຄຸນຄ່າແລະສາມາດປັບຕົວເອງເຂົ້າສັງຄົມໄດ້ ແລະ ຖ້າທຽບໃສ່ຜູ້ທີ່ບໍ່ໄດ້ຝຶກຝົນຫຼໍ່ຫຼອມຕົນເອງ ເບິ່ງຄືຄົນທີ່ບໍ່ມີຄຸນຄ່າພໍ ແລະການປັບຕົວໄດ້ຍາກ.
- ກໍລະນີຍິງ/ຊາຍ ຈຳນວນບໍ່ເທົ່າກັນຕ້ອງໃຫ້ຄະແນນສະເໝີກັນ ເຊັ່ນ ຍິງ 10 ຄົນ ຊາຍ 7 ຄົນ ການໃຫ້ເຈ້ຍສະຕິກເກີໃຫ້ຄົນລະ 5 ອັນ

  ຍິງ 10 ຄົນ X 5 = 50

  ຊາຍ 7 ຄົນ X 5 = 35

- ຖ້າກໍລະນີເປັນແບບນີ້ຕ້ອງເອົາຄະແນນເທົ່າກັບຂອງຜູ້ຍິງຄື 50 ຫານ 7 ເພື່ອໃຫ້ໄດ້ຄະແນນລວມທັງໝົດເທົ່າກັບຂອງຜູ້ຍິງ

[1] **ປັບຈາກ** **ປຶ້ມຄູ່ມືການຝຶກອົບຮົມ ລະບົບການຮຽນຮູ້ ການປະຕິບັດຈິງຈິງ ດ້ານບົດບາດຍິງ-ຊາຍ: ອົງການອອັກສະຟາມ ປະຈໍາ ສປປລາວ, ໜ້າ 7-8** (Mayoux 2014)

## 3.3 ເຄື່ອງມື ຕົ້ນໄມ້ຍຸດທະສາດ/ແກ້ໄຂບັນຫາ (Gender Challenge Action Tree)

- **ນິຍາມ**

  **ຕົ້ນໄມ້ຍຸດທະສານ/ແກ້ໄຂບັນຫາ ຫຼືເຂົ້າອີກຄວາມໝາຍໜຶ່ງກໍ່ຄືຕົ້ນໄມ້ທ້າທາຍຕໍ່ບົດບາດຍິງ-ຊາຍ** ເຊິ່ງມີຄວາມໝາຍວ່າ ຖ້າຈະແກ້ໄຂໃຫ້ໄດ້ຮັບຜົນຢ່າງມີປະສິດທິພາບ ແມ່ນທັງຍິງ ແລະຊາຍຕ້ອງໄດ້ລົງມືປະຕິບັດກິດຈະກໍາຮ່ວມກັນ, ເຊິ່ງມີຂັ້ນຕອນ ແລະວິທີການດັ່ງລຸ່ມນີ:
  - ລໍາຕົ້ນ ຄືບັນຫາທີ່ພົບເຫັນ
  - ຮາກ ປຽບເໝືອນສາເຫດ ທີ່ກໍ່ໃຫ້ເກີດບັນຫາ
  - ກິ່ງ/ງ່າ ຄືວິທີແກ້ໄຂ
  - ໝາກ ຄືຜົນຂອງການແກ້ໄຂ

- **ເໝາະສົມສໍາລັບນໍາໃຊ້ວິເຄາະກ່ຽວກັບ:**

  - ບັນຫາທີ່ທັງຍິງ ແລະຊາຍໄດ້ພົບເຫັນຕ່າງໆ
  - ບັນຫາທີ່ເກີດຂຶ້ນໃນຊີວິດປະຈໍາວັນ
  - ບັນຫາກ່ຽວກັບວຽກທີ່ກໍາລັງປະຕິບັດຢູ່

  ***ເຄື່ອງມືຕົ້ນໄມ້ຍຸດທະສາດ ສາມາດນໍາໃຊ້ກັບທຸກຄົນ***

- **ວິທີການນໍາໃຊ້**

**ເຄື່ອງມືຕົ້ນໄມ້ຍຸດທະສາດ/ແກ້ໄຂບັນຫາ ແມ່ນໃຊ້ເພື່ອ** ວິເຄາະ ເຖິງສາຍເຫດຂອງບັນຫາທີ່ໄດ້ມາຈາກ ການວິເຄາະຈາກເຄື່ອງມືເພັດ, ຜູ້ເຂົ້າຮ່ວມສາມາດ ວິເຄາະໄດ້ ເຖິງກິດຈະກໍາທີ່ຄວນເຮັດເພື່ອສາມາດແກ້ບັນຫາທີ່ມາຈາກສາເຫດຫລັກໆໄດ້. ຜົນໄດ້ຮັບຈາກເຄື່ອງມືນີ້ ແມ່ນຈະນໍາໄປວາງແຜນ ຕໍ່ຢູ່ໃນເຄື່ອງມື ເສັ້ນທາງສູ່ເປົ້າຫມາຍ.

**ເວລາ**: 120 ນາທີ

**ຂັ້ນຕອນ ແລະ ວິທີການ**

**ຂັ້ນຕອນທີ 1**

ຄັດເລືອກບັນຫາ ຫລື ສິ່ງທ້າທາຍທີ່ໄດ້ຈາກເຄື່ອງມືເພັດ, ໂດຍເລືອກເອົາບູລິມາສິດທີ 1 ,  ທີ 2 ແລະທີ 3 ; ພາຍຫຼັງ ໄດ້ບັນຫາມາແລ້ວ ຄູຝຶກຖາມຜູ້ເຂົ້າຮ່ວມວ່າໃຜຈະອາສາມາແຕ້ມຕົ້ນໄມ້ ເພື່ອເປັນຕົວຢ່າງ ແລ້ວຄູຝຶກ ອະທິບາຍເພີ່ມເຕີມ.




**ຂັ້ນຕອນທີ່ 2:**

ແບ່ງກຸ່ມຍິງ , ກຸ່ມຊາຍ  ແລະກຸ່ມປະສົມຍິງ-ຊາຍ ພ້ອມທັງແຍກອຸປະກອນການແຕ້ມໃຫ້ແຕ່ລະກຸ່ມ **ພ້ອມທັງ ໃຫ້ແຕ່ລະກຸ່ມດັດແກ້ບັນຫາໃນບັດຄໍາໃຫ້ມີຄວາມໝາຍແຈ້ງຕື່ມ ແລະ ຕິດໃສ່ກາງລໍາຕົ້ນ ຂອງຕົ້ນໄມ້.**



**ຂັ້ນຕອນທີ່ 3:**

ແຕ່ລະກຸ່ມພາກັນຊອກຫາສາເຫດຂອງບັນຫາມີຫຍັງມີແດ່ໂດຍທີ່ແຕ້ມສາເຫດ ຂອງບັນຫາ ໃສ່ຮາກ ?(ໂດຍໃຊ້ຄຳຖາມເຈາະຈີ້ມຍ້ອນຫຍັງ? ຍ້ອນຫຍັງ? ຍ້ອນຫຍັງ ? ...) ໃຫ້ເຫັນຮາກແກ້ວຂອງບັນຫາ.

**ຂັ້ນຕອນທີ່ 4:**

ລະບຸກິດຈະກຳທີ່ຈະດຳເນີນ ຫລື ສິ່ງທີ່ຢາກເຮັດ ເພື່ອແກ້ໄຂບັນຫາ ຫລື ສິ່ງທ້າທາຍທີ່ແຕ່ລະກຸ່ມເລືອກ ອີງຕາມການວິເຄາະສາເຫດຂອງບັນຫາ

**ຂັ້ນຕອນທີ 5:**

ລະບຸເຖິງຜົນໄດ້ຮັບ ຫລື ຫມາກຜົນທີ່ຈະໄດ້ ຫລັງຈາກ ທີ່ດຳເນີນກິດຈະກຳຕ່າງໆ





- ເວລາລະບຸເຖິງສາເຫດຂອງບັນຫາບໍ່ພະຍາຍາມລະດົມສະໝອງຜູ້ເຂົ້າຮ່ວມໃຫ້ສະເພາະເຈາະຈົງຫລາຍເກີນໄປ ເພາະຈະເຮັດໃຫ້ມີຂໍ້ຈຳກັດໃນການຄິດຂອງຜູ້ເຂົ້າຮ່ວມໃນການລະບຸ ວິທີການແກ້ໄຂ
- ຄວນໃຊ້ຄຳຖາມເປີດໃນການຖາມ ຫລາຍກວ່າຄຳຖາມປິດ ເປັນຫຍັງ? ຍ້ອນຫຍັງ? ແນວໃດ? ວິທີໃດແດ່?
- ເປັນການປູກຈິດສຳນຶກໃຫ້ຜູ້ເຂົ້າຮ່ວມຮູ້ຈັກ ເອົາບັນຫາທີ່ໄດ້ຈາກ ເຄື່ອງມືເພັດມາວິເຄາະຊອກຫາສາຍເຫດຫຼັກ ແລະສາເຫດຍ່ອຍທີ່ຕ້ອງການຊອກຫາວິທີແກ້ໄຂ, ເພື່ອໃຫ້ໄດ້ຮັບການແກ້ໄຂທີ່ຖືກວິທີອັນທີ່ຈະໄປສູ່ໝາກຜົນທີ່ດີທີ່ສຸດ
- ວິທີການແກ້ໄຂຂອງແຕ່ລະກຸ່ມແລະກິດຈະກຳທີ່ຜູ້ເຂົ້າຮ່ວມຈະເຮັດມີຄວາມເໝາະສົມທີ່ຈະແກ້ໄຂບັນຫານັ້ນໄດ້.

## 3.4 ເຄື່ອງມືຕົ້ນໄມ້ດຸ່ນດ່ຽງ (Gender Balance Tree)



- **ນິຍາມ**

  ***ຕົ້ນໄມ້ດຸ່ນດ່ຽງ*** ໃຊ້ໃນການວິເຄາະລາຍຮັບ-ລາຍຈ່າຍ, ການຕັດສິນໃຈ, ການແບ່ງງານ, ສິດໃນການນຳໃຊ້ຊັບສິນ ເຊິ່ງເຫັນວ່າຍັງບໍ່ມີຄວາມສະເໝີພາບກັນລະຫວ່າງຍິງ-ຊາຍໃນລະດັບຄອບຄົວ, ຊຸມຊົນ ແລະສັງຄົມ

  - ລຳຕົ້ນ ຄືບັນຫາທີ່ພົບເຫັນ
  - ຮາກ ປຽບເໝືອນ ແຮງງານ (ໃຜ ເຮັດຫຍັງ)/ຜູ້ທີ່ມີສິດໃນການຕັດສິນໃຈ/ ຜູ້ທີ່ມີສິດຄຸ້ມຄອງ
  - ກິ່ງ/ງ່າ ຄືລາຍຈ່າຍ/ ວິທີແກ້ໄຂ/ວິທີການປັບປຸງ, ປ່ຽນແປງ
  - ໝາກ ຄືຜົນຂອງການແກ້ໄຂ

- **ເໝາະສົມສຳລັບນຳໃຊ້ວິເຄາະ:**
  - ການແບ່ງງານ
  - ວິເຄາະລາຍຮັບ-ລາຍຈ່າຍ
  - ວິເຄາະກ່ຽວກັບຄວາມສະເໝີພາບໃນການຕັດສິນໃຈ
  - ວິເຄາະເຖິງສິດສະເໝີພາບໃນການສືບມູນມໍລະດົກ

  ***ເໝາະສົມກັບການນຳໃຊ້ໃນຄອບຄົວ/ຄົວເຮືອນ***

- **ຈຸດປະສົງ:**

ເພື່ອໃຫ້ຜູ້ເຂົ້າຮ່ວມສາມາດວິເຄາະ ການແບ່ງວຽກ/ງານ, ວິເຄາະແຫຼ່ງລາຍຮັບ ແລະລາຍຈ່າຍຂອງຄອບຄົວ, ວິເຄາະການຕັດສິນໃຈຕ່າງໆຢູ່ໃນຄົວເຮືອນ, ວິເຄາະເຖິງສິດຄຸ້ມຄອງຊັບສິນບັດ/ສືບມູນມໍລະດົກ. ຜົນຂອງການວິເຄາະຈາກຕົ້ນໄມ້ດຸ່ນແມ່ນຈະນຳເອົາໄປໃຊ້ໃນການວາງແຜນເຊັ່ນໃຊ້ກັບເຄື່ອງມືເສັ້ນທາງສູ່ເປົ້າໝາຍ.

- **ເວລາ**: 120 ນາທີ

**ວິທີການ ແລະ ຂັ້ນຕອນ**:

**ຂັ້ນຕອນທີ່ 1:**

ອະທິບາຍຕົ້ນໄມ້ດຸ່ນດຽງ ແມ່ນຕົ້ນໄມ້ທີ່ມີຄວາມສະເໝີພາບບົດບາດຍິງ-ຊາຍຢູ່ໃນຄອບຄົວ, ຄູຝຶກແຕ້ມຕົ້ນໄມ້ດຸ່ນດ່ຽງ ແລ້ວອະທິບາຍວິທີການແຕ້ມໃນຂັ້ນຕອນທີ 1 ໃຫ້ຜູ້ເຂົ້າຮ່ວມທຸກຄົນໃນກຸ່ມໃຫ້ເຂົ້າໃຈ ຄື: ແຕ້ມລຳຕົ້ນຂອງຕົ້ນໄມ້ພ້ອມທັງແຕ້ມມີໃຜແດ່ຢູ່ໃນຄອບຄົວ (ຍິງ, ຊາຍ, ເດັກນ້ອຍ, ຜູ້ເຖົ້າ...)



**ຂັ້ນຕອນທີ່ 2:**

ແຕ້ມຮາກຂອງຕົ້ນໄມ້ ເຊິ່ງແຍກຮາກທີ່ແມ່ຍິງເຮັດວຽກທີ່ມີລາຍຮັບ ແລະ ວຽກທີ່ບໍ່ມີລາຍຮັບ ຢູ່ດ້ານຂ້າງໜຶ່ງ, ສ່ວນອີກຂ້າງໜຶ່ງແຕ້ມຮາກທີ່ບົ່ງບອກເຖິງວຽກທີ່ຜູ້ຊາຍເຮັດທີ່ມີລາຍຮັບ ແລະບໍ່ມີລາຍຮັບ, ສ່ວນຮາກທາງກາງຄືຮາກທີ່ທັງຍິງ ແລະຊາຍເຮັດວຽກຮ່ວມກັນ. ( ຈະເປັນການດີ ຖ້າຍິງແຕ້ມສະເພາະຮາກທີ່ກ່ຽວກັບວຽກແມ່ຍິງ ແລະຮາກທີ່ເຮັດຮ່ວມກັນ, ຜູ້ຊາຍແຕ້ມສະເພາະວຽກຜູ້ຊາຍເຮັດ ແລະຮາກທີ່ເຮັດຮ່ວມກັນ)



**ຂັ້ນຕອນທີ່ 3:**

ແຕ້ມງ່າຂອງຕົ້ນໄມ້ ເຊິ່ງຕ້ອງດຸ່ນດ່ຽງກັບຮາກຂອງຕົ້ນໄມ້ ມີງ່າທີ່ບົ່ງບອກເຖິງລາຍຈ່າຍສະເພາະ/ສ່ວນຕົວຂອງແມ່ຍິງ, ລາຍຈ່າຍສະເພາະ/ສ່ວນຕົວຂອງຜູ້ຊາຍ ແລະງ່າທີ່ທັງຍິງ ແລະຊາຍຮ່ວມກັນຈ່າຍ



**ຂັ້ນຕອນທີ່ 4:**

ແຕ້ມຮູບໃຜເປັນຜູ້ຄອບຄອງ/ເຈົ້າຂອງຊັບສິນບັດໃນຄອບຄົວເຊັ່ນ: ເຮືອນ, ດິນນາ, ດິນສວນ, ສັດລ້ຽງ, ພາຫານະ ... ແລ້ວຫຼັງຈາກນັ້ນຖາມຜູ້ເຂົ້າຮ່ວມວ່າຮູ້ສຶກແນວໃດ ແລ້ວໂຕໃດຄວນມີສິດສະເໜີພາບກັນ



**ຂັ້ນຕອນທີ່ 5:**
ຄັດເລືອກໂດຍໝາຍອ້ອມ ຫຼືຂີດຂ້າສິ່ງໃດທີ່ທັງຍິງ ແລະຊາຍຕ້ອງການທີ່ຈະປ່ຽນແປງ ແລະປັບປຸງໃຫ້ເກີດມີຄວາມດຸ່ນດ່ຽງ/ສະເໝີພາບລະຫວ່າງຍິງຊາຍໃນຄອບຄົວ.



- ❖ ຫຼັງຈາກເຮັດສຳເລັດຕາມຂັ້ນຕອນດັ່ງກ່າວມານັ້ນແລ້ວ, ໃຫ້ຕາງໜ້າກຸ່ມຂຶ້ນນຳສະເໜີ ແລ້ວສົນທະນາໃນກຸ່ມໃຫຍ່

**ສິ່ງທີ່ຄູຝຶກຄວນຄຳນຶງ**:

- ເປັນການປູກຈິດສຳນຶກໃຫ້ຜູ້ເຂົ້າຮ່ວມຮູ້ຈັກການແບ່ງປັນໜ້າວຽກຂອງແຕ່ລະຄົນໃນຄອບຄົວວ່າ ຍິງ ຫຼື ຊາຍ ຮັບພາລະວຽກໜັກ, ເບົາຫຼາຍປານໃດແລະການໄລ່ລຽງໃນການໃຊ້ຈ່າຍສ່ວນຕົວຂອງຍິງຫຼືຊາຍ, ການໃຊ້ຈ່າຍຮ່ວມກັນ ໃນຄົວເຮືອນ ອີກຢ່າງໜຶ່ງ ໄດ້ວິເຄາະເຖິງສິດໃນການຄຸ້ມຄອງຊັບສິນບັດ ແລະ ການຕັດສິນໃຈຂອງຍິງຫຼືຊາຍໃນໄລຍະຜ່ານມາ ວ່າໃຜຕັດສິນໃຈຫຼາຍ ໜ້ອຍກວ່າກັນ ແລ້ວອະນາຄົດຈະປັບປຸງຄືແນວໃດ.
- ນຳເອົາຂໍ້ກຳນົດກິດຈະກຳທີ່ຈະຕ້ອງປ່ຽນແປງ/ປັບປຸງໄປໃຊ້ໃນເຄື່ອງມືເສັ້ນທາງສູ່ຄວາມຝັນ/ເປົ້າໝາຍ

### 3.5 ເຄື່ອງມື ແຜນວາດ ສາຍພົວພັນພະລັງທາງສັງຄົມ (Social Empowerment Map)

- **ນິຍາມ**
  ແຜນວາດ ສາຍພົວພັນພະລັງທາງດ້ານສັງຄົມໝາຍເຖິງເຄື່ອງມືໃນການວິເຄາະ ທ່າແຮງ/ໂອກາດທີ່ເຮົາມີໃນອ້ອມຂ້າງຕົວເຮົາ, ນອກນັ້ນຍັງໄດ້ວິເຄາະເຖິງອຸປະສັກ ແລະສິ່ງກີດຂວາງທີ່ມີຢູ່ອ້ອມຂ້າງຕົວເຮົາເຊັ່ນກັນ.

- **ຈຸດປະສົງ**:
  - ເພື່ອ ວິເຄາະສາຍພົວພັນລະຫວ່າງບຸກຄົນ ແລະ ສັງຄົມ  ອ້ອມຂ້າງ(ຄອບຄົວ, ຊຸມຊົນ ແລະ ອົງກອນທີ່ມີສ່ວນສຳຄັນຕໍ່ກັບບຸກຄົນດັ່ງກ່າວ)  ເຊິ່ງລວມມີ ສາຍພົວພັນທາງດ້ານ ຄວາມຮັກ ຄວາມຜູກພັນ, ສາຍພົວພັນທາງດ້ານການເງິນ/ເສດຖະກິດ ແລະ ສາຍພົວພັນທາງດ້ານອຳນາດ.
  - ເພື່ອນຳເອົາຜົນທີ່ວິເຄາະໄດ້ຈາກການນຳໃຊ້ເຄື່ອງມືນີ້ ໄປໃຊ້ໃນເຄື່ອງມືເສັ້ນທາງສູ່ຄວາມຝັນໃນເບື້ອງໂອກາດ ແລະທ່າແຮງ, ສ່ວນສິ່ງທີ່ເປັນສິ່ງທ້າທາຍ ແມ່ນນຳເອົາໄປວິເຄາະໃນຕົ້ນໄມ້ຍຸດທະສາດ.

**ເວລາ:**

180 **ນາທີ** (ອະທິບາຍຂັ້ນຕອນ ແລ້ວແຕ່ລະຄົນແຕ້ມໃນກຸ່ມຍິງ/ກຸ່ມຊາຍ 60 ນາທີ, ແລກປ່ຽນໃນກຸ່ມຍ່ອຍ 30 ນາທີ, ສະເໜີໃນກຸ່ມໃຫ່ຍ ແລະສົນທະນາ 60 ນາທີ, ຄູຝຶກສະຫຼຸບແລະສະເໜີແນະເພື່ອຄວາມກະຈ່າງແຈ້ງ 30)

**ວິທີການ ແລະ ຂັ້ນຕອນ :**

***ວິທີການ:***

- ແບ່ງກຸ່ມຍິງ, ກຸ່ມຊາຍເພື່ອແຍກກັນໄປວິເຄາະ
- ແນະນຳແຕ່ລະຄົນແຕ້ມຮູບສາຍພົວພັນທີ່ຕົນເອງມີ
- ແລກປ່ຽນກັບໝູ່ໃນກຸ່ມຍ່ອຍ
- ຫຼັງຈາກນັ້ນຄັດເລືອກຕົວແທນຈາກແຕ່ລະກຸ່ມມານຳສະເໜີໃນກຸ່ມໃຫຍ່
- ຄູຝຶກ/ຜູ້ອຳນວຍຄວາມສະດວກສະຫຼຸບ

***ຂັ້ນຕອນ:***

**ຂັ້ນຕອນທີ່1:**
ໃຫ້ແຕ່ລະຄົນແຕ້ມຮູບຕົນເອງໃສ່ໃນວົງມົນ ຂ້ອຍແມ່ນໃຜ? (ເປັນຍິງ/ ຊາຍ, ຜູ້ເຖົ້າ, ຄົນພິການ ພ້ອມທັງບົ່ງບອກເຖິງອາຊີບນຳກໍ່ຈະເປັນການດີ)



**ຂັ້ນຕອນທີ່2:** ແມ່ນໃຜສຳຄັນທີ່ສຸດໃນຊີວິດຂອງຂ້ອຍ ຫລື ກຸ່ມຄົນໃດ /ອົງກອນໃດ ? ໃຫ້ແຕ້ມຮູບບຸກຄົນນັ້ນໃສ່ອ້ອມວົງ ມົນ ໄລຍະໃກ້ເທົ່າໃດ ແມ່ນ ຫມາຍເຖິງສຳຄັນ ຫລາຍ ແລະ ໄລຍະຫ່າງອອກໄປແມ່ນຫມາຍເຖິງ ຄວາມຄັນບໍ່ຫລາຍ.



**ຂັ້ນຕອນທີ່3:** ເປັນຫັຍງຈຶ່ງສຳຄັນ?( ແຕ້ມຮູບລູກສອນ) ຍົກຕົວຢ່າງ: ສີຟ້າ ໝາຍເຖິງ ຄວາມຮັກ ຄວາມຜູກພັນ, ສີຂຽວ ໝາຍເຖິງ ການເງິນ/ເສດຖະກິດ, ສີແດງ ໝາຍເຖິງ ອຳນາດ

- ສີຟ້າ ຫມາຍເຖິງສາຍພົວພັນທາງດ້ານຄວາມຮູ້ສຶກຜູກພັນ
- ສີຂຽວໝາຍເຖິງ ສາຍພົວພັນທາງດ້ານການເງິນ
- ສີແດງ ຫມາຍເຖິງ ສາຍພົວພັນທາງດ້ານອຳນາດ
- ລູກສອນ ຫມາຍຖິງສາຍພົວພັນ ລູກສອນປີ້ນໄປເບື້ອງໃດ ແມ່ນຫມາຍເຖິງສາຍພົວພັນຂອງໂຕບຸກຄົນ ມີຕໍ່ບຸກຄົນ ຫລື ກຸ່ມຄົນ ຫລື ອົງກອນ ໃດນຶ່ງ. ຖ້າມີສາຍພົວພັນທັງສອງທາງ ແມ່ນລູກສອນຈະມີຢູ່ທັງສອງທາງ
- ຕົວຢ່າງ ລູກສອນທີ່ສະແດງໃຫ້ເຫັນວ່າ
    - ບຸກຄົນດັ່ງກ່າວມີ ສາຍພົວພັນທາງດ້ານຄວາມາຮູ້ສຶກຜູກພັນກັບຄອບຄົວ ຄອບຄົວກໍ່ມີຄວາມຮັກ ຄວາມຜູກ ພັນຕໍ່ບຸກຄົນນັ້ນເຊັ່ນກັນແມ່ນໃຊ້ລູກສອນ ແລະ ສີນີ້
    - ບຸກຄົນດັ່ງກ່າວມີ ສາຍພົວພັນທາງດ້ານການເງິນຕໍ ລູກໆ ເພາະວ່າມີແຕ່ລາວເທົ່ານັ້ນທີ່ເປັນຄົນສະຫນັບສະ ຫນູນທາງດ້ານການເງິນ ໃຫ້ຄອບຄົວ ແມ່ນໃຊ້ລູກສອນຊີ້ໄປຫາດ້ານດຽວ

( ການໃຫ້ລູກສອນແຕ່ລະຢ່າງ ແມ່ນອີງຕາມຄວາມເປັນຈິງ, ຖ້າເບື້ອງໃດມີອຳນາດ, ຄວາມຜູກພັນ, ການເງິນ ຫຼາຍ ກ່ວາແມ່ນໃຫ້ໝາຍລູກສອນໄປເບື້ອງນັ້ນໃຫ່ຍກວ່າ, ຖ້າສະເໝີກັນລູກສອນທັງສອງ ເບື້ອງຕ້ອງສະເໝີກັນ, ຖ້າບໍ່ມີກະບໍ່ໃສ່ ດັ່ງນັ້ນສິ່ງທີ່ສຳຄັນ ຄື , ສີ , ຫົວຂອງລູກສອນ, ຂະຫນາດຂອງລູກສອນ ແລະ ຮູບຊົງ ແມ່ນມີສ່ວນສະແດງເຖິງສາຍພົວພັນ ຂອງບຸກຄົນນັ້ນຕໍ່ສັງຄົມທີ່ລາວຢູ່)




ກ. ໝູ່: ສຳຫລັບ ທ. ກິ ໝູ່ລາວ ແລະ ລາວ ສ່ວນໃຫຍ່ແລ້ວກໍ່ເອື້ອຍອີງກັນ ຄວາມສຳພັນລາວ ແລະ ໝູ່ຂອງລາວກໍ່ເລີຍມີສາຍສຳພັນທັງອາລົມຄວາມຮູ້ສຶກ ແລະ ອຳນາດຕໍ່ກັນ ສ່ວນ ເລື່ອງເງິນ ແມ່ນມີພຽງແຕ່ລາວໄດ້ເອົາເງິນໃຫ້ໝູ່ລາວບາງຄັ້ງເພາະວ່າ ໝູ່ລາວ ບໍ່ທັນມີວຽກເປັນຫລັກເປັນແຫລ່ງ ແລະ ສາຍສຳພັນທັງ ສາມອັນກໍ່ບໍ່ຫລາຍຖ້າທຽບໃສ່ ຄອບຄົວລາວ.

ຂ. ຄອບຄົວ: ສຳຫລັບທ.ກິ ຖືວ່າ ລາວ ແລະ ຄອບຄົວຂອງລາວແມ່ນແມ່ນສາຍພົວພັນເຊື່ອງກັນແລະ ກັນ ແລະ ສຳຄັນຫລາຍໂດຍສະເພາະເລື່ອງອາລົມ ແລະຄວາມຮັກ ຄວາມຜູກພັນ ແລະ ອຳນາດ ແຕ່ໃນເລື່ອງຂອງ ສາຍພົວພັນທາງດ້ານການເງິນ ມີພຽງແຕ່ລາວໃຫ້ສະໜັບສະໜູນເລື່ອງການເງິນຕໍ່ຄອບຄົວ.

ຄ.ເພື່ອນບ້ານ: ສຳຫລັບທ.ກິ ເພາະວ່າ ເພີ່ນມີລູກນ້ອຍ ແລະ ສິ່ງສຽງແຮງໃຫ້ເພື່ອນບ້ານ ດັ່ງນັ້ນເພີ່ນຈຶ່ງມີຄວາມກັງວົນຢ້ານວ່າ ຈະກວນເພື່ອນບ້ານ ແຕ່ເພື່ອນບ້ານເພີ່ນກະບໍ່ແຄເພີ່ນ ແລະ ນັ້ນກໍ່ໝາຍຄວາມວ່າ ເພື່ອນບ້ານກໍ່ມີອຳນາດຫລາຍກວ່າເພີ່ນ ແລະ ເພີ່ນກໍ່ບໍ່ມີອຳນາດຕໍ່ພວກເຂົາຫລາຍປານໃດ. ແລະ ໃນເລື່ອງຂອງສາຍສຳພັນກ່ຽວກັບ ການເງິນ ນັ້ນແມ່ນ ທັງເພີ່ນ ແລະ ເພື່ອນບ້ານ ແມ່ນບໍ່ມີ ດັ່ງນັ້ນເລີຍບໍ່ມີເສັ້ນສີຂຽວ

ງ. ທະນາຄານ: ສຳຫລັບທ້າວກິ ລາວໄດ້ຢືມເງິນນຳທະນາຄານ ແລະ ດັ່ງນັ້ນ ທະນາຄານຈຶ່ງມີອຳນາດຕໍ່ລາວຫລາຍກວ່າ ແລະ ລາວຈ່າຍພຽງແຕ່ຂີ້ດອກເລັກນ້ອຍ ໃຫ້ທະນາຄານ ແລະ ດັ່ງນັ້ນສີແດງເບື້ອງລາວຫາທະນາຄານຈຶ່ງເປັນຈ້ຳເມັດ ແລະ ທາງກັບກັນທະນາຄານພັດມີອຳນາດຫລາຍກວ່າຕໍ່ລາວ ແລະ ການສະແດງສີຂຽວກໍ່ເຊັ່ນດຽວກັນ

**ຂັ້ນຕອນທີ່ 4:** ແມ່ນໃຜທີ່ເຈົ້າຢາກປ່ຽນແປງ (ແຕ້ມຮູບໜ້າຍິ້ມ, ທຳມະດາ, ບໍ່ພໍໃຈ)




**ຂັ້ນຕອນທີ 5:**

ຂ້ອຍຈະປ່ຽນເຮັດວິທີໃດເພື່ອຈະໃຫ້ເກີດການປ່ຽນແປງພາຍໃນ 3-6 ເດືອນຕໍ່ໜ້ານີ້, ຄືຈັດລຽງບຸລິມະສິດເພື່ອການແກ້ໄຂເປັນລຳດັບ.




[2] **ປັບຈາກ** **ປື້ມຄູ່ມືການຝຶກອົບຮົມ ລະບົບການຮຽນຮູ້ ການປະຕິບັດຈິງຈິງ ດ້ານບົດບາດຍິງ-ຊາຍ: ຕົ້ນໄມ້ຄຸນຄ່າງບົດບາດຍິງ-ຊາຍ, ໜ້າ 11-15, ອົງກອນ ແມ່ຍິງຮ່ວມໃຈພັດທະນາ MHP** (SUNCSA 2021).

### 3.6 ເຄື່ອງມືເສັ້ນທາງໄປສູ່ຄວາມຝັນ/ເປົ້າໝາຍ( Vision Road Journey)

- **ນິຍາມ**

  ເຄື່ອງມືເສັ້ນທາງໄປສູ່ຄວາມຝັນ/ເປົ້າໝາຍ ເປັນເຄື່ອງມືໜຶ່ງທີ່ສຳຄັນ, ເຊິ່ງຈະຊ່ວຍໃຫ້ຜູ້ເຂົ້າຮ່ວມສາມາດນຳໄປຈັດຕັ້ງປະຕິບັດໄດ້ໃນລະດັບບຸກຄົນ, ຄອບຄົວ ແລະ ໃນຊຸມຊົນ.  ເຄື່ອງມືນີ້ແມ່ນ ໄດ້ກຳນົດແຜນໃນການຈັດຕັ້ງປະຕິບັດ ໂດຍອີງໃສ່ວິທີການແກ້ໄຂທີ່ໄດ້ວິເຄາະໃນຕົ້ນໄມ້ຍຸດທະສາດ/ຕົ້ນໄມ້ດຸ່ນດ່ຽງ, ນອກນັ້ນກໍ່ຍັງເຊື່ອມໂຍງທັງແຜນວາດທາງສັງຄົມນຳອີກ. ການສ້າງແຜນວາດເສັ້ນທາງສູ່ເປົ້າໝາຍ/ຄວາມຝັນນັ້ນ ຕ້ອງໄດ້ກຳນົດເວລາຈະແຈ້ງ, ສາມາດເຮັດໄດ້ແທ້, ແລະມີຕົວຊີ້ວັດທີ່ຊັດເຈນ. ນອກນັ້ນ, ຍັງໄດ້ຄຳນຶງເຖິງໂອກາດ ແລະທ່າແຮງທີ່ເຮົາມີ, ໃນຂະນະດຽວກັນກໍ່ຕ້ອງໄດ້ຄຳນຶງເຖິງຄວາມສ່ຽງ ຫຼື ອຸປະສັກທີ່ຈະເກີດຂຶ້ນໃນໄລຍະປະຕິບັດແຜນດັ່ງກ່າວ.

- **ຈຸດປະສົງ**:  ເພື່ອໃຫ້ຜູ້ເຂົ້າຮ່ວມສາມາດສ້າງແຜນພັດທະນາຕົນເອງ,  ຄອບຄົວ,  ຊຸມຊົນ  ແລະສັງຄົມ  ໂດຍການນຳໃຊ້ເຄື່ອງມືເສັ້ນທາງໄປສູ່ເປົ້າໝາຍເປັນແນວທາງໃນການວາງແຜນນັ້ນໆ.

- **ເວລາ**: 120 ນາທີ

**ວິທີການ ແລະ ຂັ້ນຕອນ:**

***ວິທີການ:***

1. ຖາມຜູ້ເຂົ້າຮ່ວມວ່າ: ຄວາມຝັນ/ເປົ້າໝາຍໃນອະນາຄົດຂອງເຮົາມີຮູບຮ່າງຄືແນວໃດ? ແລ້ວໃຫ້ຜູ້ເຂົ້າຮ່ວມອາສາສະໝັກມາແຕ້ມ.
2. ຄູຝຶກ/ຜູ້ອຳນວຍຄວາມສະດວກເລົ່າເຖິງຄວາມຝັນຂອງຜູ້ເຂົ້າຮ່ວມທາງທະວິບອັຟລິກກາເຂົາເຈົ້າຝັນ/ກຳນົດເປົ້າໝາຍປຽບເໝືອນດວງຕາເວັນ ເພາະມັນຈະເຮັດໃຫ້ເຮົາມີພະລັງທີ່ຈະກ້າວໄປທາງໜ້າຢ່າງໝັ້ນຄົງ, ຫຼັງຈາກນັ້ນ ຄູຝຶກດັດປັບຮູບທີ່ຜູ້ເຂົ້າຮ່ວມແຕ້ມ ແລ້ວອະທິບາຍຂັ້ນຕອນຕ່າງໆ
3. ແບ່ງກຸ່ມຍິງ, ກຸ່ມຊາຍ ແລ້ວໃຫ້ຜູ້ເຂົ້າຮ່ວມໃນກຸ່ມນັ້ນແຕ້ມເສັ້ນທາງໄປສູ່ເປົ້າໝາຍຂອງຕົນ.
4. ຫຼັງຈາກແຕ່ລະຄົນແຕ້ມແລ້ວ ໃຫ້ຜູ້ເຂົ້າຮ່ວມຈັບຄູ່ກັນເພື່ອແລກປ່ຽນໃນສິ່ງທີ່ຕົນເອງແຕ້ມ.
5. ໃຫ້ຜູ້ເຂົ້າຮ່ວມແລກປ່ຽນໃນກຸ່ມຍ່ອຍ
6. ສະເໜີໃຫ້ອາສາສະໝັກໃນແຕ່ລະກຸ່ມນຳສະເໜີແລກປ່ຽນໃນກຸ່ມໃຫ່ຍ
7. ແນະນຳຜູ້ເຂົ້າຮ່ວມນຳເອົາແຜນທີ່ຕົນເອງແຕ້ມນັ້ນກັບເມືອເຮືອນເພື່ອແບ່ງປັນກັບຄົນໃນຄອບຄົວ ແລະໝູ່ເພື່ອນ.

***ຂັ້ນຕອນ***

**<u>ຂັ້ນຕອນທີ່1</u>**

ແຕ້ມຮູບວົງມົນໃຫຍ່ຢູ່ເບື້ອງເທິງຂວາມືຂອງແຈເຈ້ຍ, ແລ້ວແຕ້ມສິ່ງທີ່ຕົນເອງຢາກມີ, ຢາກໄດ້, ຢາກເຫັນໃນໄລຍະໃດໜຶ່ງເຊັ່ນ: 1ປີ, 3ປີ, 5ປີ ...




**ຂັ້ນຕອນທີ່2**

ປະຈຸບັນຕົນເອງມີຫຍັງແດ່ແລ້ວ? ແຕ້ມຮູບວົງມົນຫຼຸດລົງຈາກໂຕທີ່ໜຶ່ງແລະໃຫ້ໄລຍະຫ່າງພໍປະມານ ແລ້ວຂີດເສັ້ນຕໍ່ໃສ່ກັນ.




**ຂັ້ນຕອນທີ່3**

ອາດີດກ່ອນຈະມາເຖິງຈຸດນີ້ເປັນຄືແນວໃດ? ແຕ້ມຮູບວົງມົນຫຼຸດລົງຈາກຮູບໂຕທີ່ສອງແລ້ວຂີດເສັ້ນຄົດລ້ຽວຈາກຂອບວົງໂຕທີ່ສອງມາຕໍ່ໃສ່ຂອບວົງມົນໂຕທີ່ສາມ, ຮູບວົງໂຕທີ່ສາມແມ່ນອະດີດທີ່ຜ່ານມາ




**ຂັ້ນຕອນທີ່ 4**

ກ. ແຕ້ມຮູບໃສ່ເບື້ອງເທິງຂອງເສັ້ນທາງ ທີ່ສື່ ຄວາມໝາຍເຖິງໂອກາດ/ທ່າແຮງທີ່ສະໜັບສະໜູນໃຫ້ບັນລຸເປົ້າໝາຍ

ຂ. ແຕ້ມຮູບໃສ່ເບືອງລຸ່ມຂອງເສັ້ນທາງ ທີ່ສື່ຄວາມໝາຍເຖິງອຸປະສັກ/ສິ່ງກີດຂວາງເສັ້ນທາງບໍ່ໃຫ້ບັນລຸເປົ້າໝາຍ




**ຂັ້ນຕອນທີ່ 5**

ແຕ້ມຮູບສື່ຄວາມໝາຍເຖິງການວາງເປົ້າໝາຍໄປແຕ່ລະປີ ຫຼືແຕ່ລະໄລຍະ ໃຫ້ສອດຄ່ອງກັບເປົ້າໝາຍລວມທີ່ກໍານົດໄວ້



**<u>ຂັ້ນຕອນທີ່ 6</u>**

ແຕ້ມຮູບກິດຈະກຳໃນແຕ່ລະໄລຍະຂອງເປົ້າໝາຍຍ່ອຍ ຫຼືແຜນຂອງແຕ່ລະປີເພື່ອໄປບັນລຸຕາມເປົ້າໝາຍທີ່ວາງໄວ້



**<u>ຂັ້ນຕອນທີ່ 7</u>**

ຫຼັງຈາກຜູ້ເຂົ້າຮ່ວມແຕ້ມແລ້ວ, ໃຫ້ ແຕ່ລະຄົນ ແລກປ່ຽນໃນກຸ່ມຍ່ອຍ "**ເສັ້ນທາງໄປສູ່ເປົ້າໝາຍ" ຂອງໃຜລາວ,** ຫຼັງຈາກນັ້ນຈຶ່ງຖາມໃຜອາສາທີ່ຈະແລກປ່ຽນໃນກຸ່ມໃຫຍ່.







- ການຕັ້ງຈຸດປະສົງແບບ **SMART**

**S**pecific ລັກສະນະສະເພາະເຈາະຈົງ ແມ່ນຫຍັງເປັນສິ່ງທີ່ຢາກໃຫ້ຜູ້ຮຽນໄດ້ຮຽນຮູ້

**M**easurable ລັກສະນະສະທີ່ສາມາດວັດແທກໄດ້

**A**chievable ລັກສະນະສະທີ່ສາມາດ ບັນລຸໄດ້ ພວກເຮົາ ສາມາດບັນລຸການຮຽນຮູ້ ເຫລົ່ານີ້ໄດ້ກັບກຸ່ມເປົ້າຫມາຍໃນໄລຍະທີ່ມີ ແລະ ສະພາບການແບບນີ້ ບໍ່

**R**ealistic/relevant ລັກສະນະສະເປັນຈິງ ຫລື ກ່ຽວຂ້ອງບໍ່ ຫຼືວຂໍ້ມີຄວາມເຫມາະສົມກັບກຸ່ມເປົ້າຫມາຍຫລືບໍ່

**T**ime- bound ມີຂໍ້ກຳນົດເວລາ ເວລາໃດຜູ້ເຂົ້າຮ່ວມຈະສາມາດເຮັດຫຍັງໄດ້

- ຄຳຖາມທີ່ສາມາດຖາມ
  - ມີຄວາມເຂົ້າໃຈແນວໃດຄຳວ່າເປົ້າໝາຍ
  - ທ່ານເຄີຍວາງເປົ້າໝາຍຄອບຄົວບໍ່?
  - ຢາກວາງເປົ້າໝາຈຸດໃຫ້ຕົນເອງຫຼືຄອບຄົວຢູ່ຈຸດໃດ, ກຳນົດຈັກປີຈິງບັນລຸ
  - ດ້ານຄວາມສະເໝີພາບບົດບາດຍິງ-ຊາຍ ຢູ່ໃນຄອບຄົວແລະຊຸມຊົນຢາກໃຫ້ມີການປ່ຽນແປງຢູ່ຈຸດໃດ
  - ດ້ານການພົວພັນສ້າງຂີດຄວາມສາມາດໃຫ້ຕົນເອງຢູ່ຈຸດໃດຈິງຈະຜັກດັນໃຫ້ເປົ້າໝາຍຫ້ອງທີ່ໜຶ່ງແລະຫ້ອງທີ່ສອງບັນລຸ
  - ປະຈຸບັນຖານະຄອບຄົວເຮົາຢູ່ໃດ?
  - ດ້ານຄວາມສະເໝີພາບບົດບາດຍິງ-ຊາຍໃນຄອບຄົວແລະຊຸມຊົນເປັນແນວໃດ?
  - ການພົວພັນທາງສັງຄົມປະຈຸບັນຢູ່ຈຸດໃດ?
  - ກອ່ນຈະມາຮອດຈຸດນີ້ອະດີດຜ່ານມຄອບຄົວເປັນແນວໃດ?
  - ຄວາມສະເໝີພາບດ້ານບົດບາດຍິງ-ຊາຍເປັນແນວໃດ?
  - ການພົວພັນສັງຄົມເປັນແນວໃດ?
  - ຖ້າທຽບໃສ່ປະຈຸບັນນີ້ມີຄວາມແຕກຕ່າງກັນແນວໃດ?
  - ໂອກາດຫຼືວ່າທ່າແຮງມີຫຍັງແດ່?
  - ອຸປະສັກມີຫຍັງທີ່ຈະຂີດຂວາງບໍ່ໃຫ້ເຮົາປະສົບຜົນສຳເລັດ
  - ຈະເອົາໂອກາດຫຼືທ່າແຮງທີມີສ້າງແຜນເຮັດກິດຈະກຳແນວໃດ?
  - ຈະສ້າງແຜນຮອງຮັບແກ້ໄຂອຸປະສັກທີ່ມີແນວໃດ?

## 3.7 ເສັ້ນທາງໃຫຍ່ຫຼາຍເສັ້ນ ເພື່ອຈັດຕັ້ງປະຕິບັດຕາມແຜນການທີ່ວາງໄວ້ ( Multilane Highway Action Plan )

- **ນິຍາມ**

**ຈຸດປະສົງ**: ເພື່ອໃຫ້ຜູ້ເຂົ້າຮ່ວມ ຫລື ຊຸມຊົນໃນບ້ານຮ່ວມກັນສ້າງ ວິໄສທັດ ມີແຜນພັດທະນາບ້ານ ທີ່ຮ່ວມກັນຈາກຫລາຍໆ ຄົນພາຍໃນບ້ານ ທີ່ມີຫລາຍວັດຖຸປະສົງ

**ເວລາ**: 180 ນາທີ

**ວິທີການ ແລະ ຂັ້ນຕອນ**

**ຂັ້ນຕອນທີ່1** ແຕ້ມຮູບວົງມົນໃຫຍ່ຢູ່ເບື້ອງເທິງຂວາມືຂອງແຈເຈັຍ, ແລ້ວຂີດຂັ້ນໃຫ້ເປັນ 3 ຫ້ອງໆ ທີ່ໜຶ່ງແມ່ນວາງເປົ້າໝາຍເສຖະກິດຄອບຄົວ, ຫ້ອງທີ່ສອງແມ່ນວາງເປົ້າໝາຍ ດ້ານບົດບາດຍິງ-ຊາຍຂອງຊຸມຊົນແລະຄອບຄົວ, ຫ້ອງທີ່ສາມແມ່ນການວາງເປົ້າໝາຍຜັກດັນໃຫ້ເປົ້າໝາຍທີ່ໜຶ່ງແລະທີ່ສອງປະສົບຜົນສໍາເລັດ
**ຂັ້ນຕອນທີ່2**ແຕ້ມຮູບວົງມົນຫຼຸດລົງຈາກໂຕທີ່ໜຶ່ງແລະໃຫ້ໄລຍະຫ່າງພໍປະມານແບ່ງເປັນສາມຫ້ອງເໝືອນຮູບທໍາອິດແລ້ວຂີດເສັ້ນຕໍ່ໃສ່ກັນ, ຫອ້ງທີ່ໜຶ່ງແມ່ນຫ້ອງຖານະຄອບຄົວໃນປະຈຸບັນ, ຫ້ອງທີ່ສອງແມ່ນຫ້ອງບົດບາດຍິງ-ຊາຍໃນປະຈຸບັນ, ຫ້ອງທີ່ສາມແມ່ນຫ້ອງທີ່ເຮົາພົວພັນສັງຄົມໃນປະຈຸບັນ
**ຂັ້ນຕອນທີ່3**ແຕ້ມຮູບວົງມົນຫຼຸດລົງຈາກຮູບໂຕທີ່ສອງແລ້ວຂີດເສັ້ນຄົດລ້ຽວຈາກຂອບວົງໂຕທີ່ສອງມາຕໍ່ໃສ່ຂອບວົງມົນໂຕທີ່ສາມ, ຮູບວົງໂຕທີ່ສາມແມ່ນອະດີດທີ່ຜ່ານມາ
**ຂັ້ນຕອນທີ່ 4** ແຕ້ມຮູບທີ່ສື່ເຖິງຄວາມໝາຍ ວົງມົນທີ່ໜຶ່ງ, ວົງມົນທີ່ສອງ ແລະ ວົງມົນທີ່ສາມ
**ຂັ້ນຕອນທີ່ 5** ແຕ້ມຮູບໃສ່ເຈັຍວ່າງເບື້ອງເທິງທີ່ສື່ ຄວາມໝາຍເຖິງໂອກາດທີ່ມີ
**ຂັ້ນຕອນທີ່ 6** ແຕ້ມຮູບໃສ່ເຈັຍວ່າງເບື້ອງລຸ່ມທີ່ສື່ຄວາມໝາຍເຖິງອຸປະສັກທີ່ມີ ທີ່ຈະຄັດຂວາງບໍ່ໃຫ້ບັນລຸເປົ້າໝາຍ
**ຂັ້ນຕອນທີ່7**ແຕ້ມຮູບສື່ຄວາມໝາຍເຖິງການວາງເປົ້າໝາຍໄປແຕ່ລະປີໃຫ້ເໝາະສົມກັບເປົ້າໝາຍລ່ວມທີ່ກໍານົດໄວ້
**ຂັ້ນຕອນທີ່8**ແຕ້ມຮູບສື່ຄວາມໝາຍເຖິງການວາງແຜນເຮັດກິດຈະກໍາໄປແຕ່ລະປີໃຫ້ມັນບັນລຸຕາມເປົ້າໝາຍທີ່ວາງໄວ້

**ຂັ້ນຕອນທີ່9 ໃຫ້ຕາງຫນ້າ ຊຸມຊົນນໍາເຫນີ ເສັ້ນທາງໄປສູ່ເປົ້າຫມາຍຂອງຊຸມຊົນ**





ສິ່ງທີ່ຄູຝຶກຄວນເອົາໃຈໃສ່:

- ເຄື່ອງມືນີ້ແມ່ນການປູກຈິດສຳນຶກເຮັດໃຫ້ຜູ້ຮູ້ຈັກການວາງເປົ້າໝາຍ, ວາງແຜນຍຸດທະສາດ, ການວາງແຜນເສດ ຖະກິດຄອບຄົວ, ເຮັດໃຫ້ຮູ້ຈັກໂອກາດ ຫຼື ວ່າທ່າແຮງທີ່ມີຢູ່ໃນປະຈຸບັນ ແລະ ອຸປະສັກທີ່ຈະກີດຂວາງບໍ່ໃຫ້ ໄປເຖິງເປົ້າໝາຍ, ເພື່ອຈະຮຽນຮູ້ຊອກຫາວິທີທາງວາງແຜນແກ້ໄຂການກຳນົດເປົ້າໝາຍ ມີຄວາມ ເໝາະສົມ ກັບໂອກາດຫຼືທ່າແຮງທີ່ມີ,ການກຳນົດແຜນກິດຈະກຳທີ່ຈະເຮັດ ແລະ ອຸປະສັກທີ່ສາມາດແກ້ໄຂໄດ້ ແລະ ວິທີແກ້ໄຂຂອງຜູ້ເຂົ້າຮ່ວມ
- ຄຳຖາມທີ່ສາມາດຖາມ
    - ມີຄວາມເຂົ້າໃຈແນວໃດຄຳວ່າເປົ້າໝາຍ
    - ທ່ານເຄີຍວາງເປົ້າໝາຍຄອບຄົວບໍ່?
    - ຢາກວາງເປົ້າໝາຈຸດໃຫ້ຕົນເອງຫຼືຄອບຄົວຢູ່ຈຸດໃດ, ກຳນົດຈັກປີຈິ່ງບັນລຸ
    - ດ້ານຄວາມສະເໝີພາບບົດບາດຍິງ-ຊາຍ ຢູ່ໃນຄອບຄົວແລະຊຸມຊົນຢາກໃຫ້ມີການປ່ຽນແປງຢູ່ຈຸດໃດ
    - ດ້ານການພົວພັນສ້າງຂີດຄວາມສາມາດໃຫ້ຕົນເອງຢູ່ຈຸດໃດຈິ່ງຈະຜັກດັນໃຫ້ເປົ້າໝາຍຫ້ອງທີ່ໜຶ່ງແລະຫ້ອງທີ່ສອງບັນລຸ
    - ປະຈຸບັນຖານະຄອບຄົວເຮົາຢູ່ໃດ?
    - ດ້ານຄວາມສະເໝີພາບບົດບາດຍິງ-ຊາຍໃນຄອບຄົວແລະຊຸມຊົນເປັນແນວໃດ?
    - ການພົວພັນທາງສັງຄົມປະຈຸບັນຢູ່ຈຸດໃດ?
    - ກ່ອນຈະມາຮອດຈຸດນີ້ອະດີດຜ່ານມຄອບຄົວເປັນແນວໃດ?
    - ຄວາມສະເໝີພາບດ້ານບົດບາດຍິງ-ຊາຍເປັນແນວໃດ?
    - ການພົວພັນສັງຄົມເປັນແນວໃດ?

- ຖ້າທຽບໃສ່ປະຈຸບັນນີ້ມີຄວາມແຕກຕ່າງກັນແນວໃດ?
- ໂອກາດຫຼືວ່າທ່າແຮງມີຫຍັງແດ່?
- ອຸປະສັກມີຫຍັງທີ່ຈະຂີດຂວາງບໍ່ໃຫ້ເຮົາປະສົບຜົນສຳເລັດ
- ຈະເອົາໂອກາດຫຼືທ່າແຮງທີ່ມີສ້າງແຜນເຮັດກິດຈະກຳແນວໃດ?
- ຈະສ້າງແຜນຮອງຮັບແກ້ໄຂອຸປະສັກທີ່ມີແນວໃດ?

[1] *ປັບຈາກປຶ້ມຄູ່ມືຝຶກອົບຮົມ ລະບົບການປະຕິບັດຕົວຈິງດ້ານບົດບາດຍິງ-ຊາຍ (ອົງການ ອອັກສະຟາມ ສປປ ລາວ)*

*ແປ ແລະປັບຈາກຄູ່ມື* (Mayoux 2014)

# 4 ເອກະສານຊ້ອນທ້າຍ:

1. **ເກມ ແລະເພງ ປະກອບໃນລະຫວ່າງການຝຶກ**
2. **ຕົວຢ່າງຕາຕະລາງສຳລັບຄູຝຶກ**
3. **ເອກະສານອ້າງອີງ**

- Rocky Road to Diamond Dreams

  GALS Phase 1 Visioning and Catalyzing a Gender Justice Movement

  Implementation Manual, V1.0 - March 2014

- *ປຶ້ມຄູ່ມືຝຶກອົບຮົມ ລະບົບການປະຕິບັດຕົວຈິງດ້ານບົດບາດຍິງ-ຊາຍ (ອົງການ ອອັກສະຟາມ ສປປ ລາວ)*

-ປຶ້ມຄູ່ມືການຝຶກອົບຮົມ ລະບົບການຮຽນຮູ້ ການປະຕິບັດຈົວຈິງ ດ້ານບົດບາດຍິງ-ຊາຍ: ຕົ້ນໄມ້ດຸນດ່ຽງບົດບາດຍິງ-ຊາຍ, ໜ້າ 11-15, ອົງກອນ ແມ່ຍິງຮ່ວມໃຈພັດທະນາ MHP.

- ບົດບັນທຶກກອງປະຊຸມສຳມະນາແລກປ່ຽນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດຕົວຈິງດ້ານບົດບາດຍິງ-ຊາຍ (GALS) ທີ່ນະຄອນຫຼວງ ວຽງຈັນຄັ້ງວັນທີ 22-25, ກັນຍາ, 2015 (ຄູ່ຮ່ວມງານອົງການອອັກຟາມ)

References:


[1] Mayoux, Linda. 2014. "Rocky Road to Diamond Dreams - GALS Phase 1 Visioning and Catalysing a Gender Justice Movement Implementation Manual, V1.0." (March): 1–148. www.oxfamnovib.nl.

[2] SUNCSA. 2021. "Gender Action Learning System (GALS) Implementation Manual." *Scaling Up Nutrition Civil Society Alliance in Lao PDR. https://suncsalaos.org/document/gals-version-2021/.*

**Authors**

**Boutsady Khounnouvong,** Freelance Consultant-Gender Specialist, Vientiane, Lao PDR (boutsady.kh@gmail.com)
**Khamla Keovongphet,** Freelance Consultant-Gender Specialist, Borkeo Province, Lao PDR
**Somphasith Douangsavanh**, Regional Researcher - Hydrogeologist, International Water Management Institute (IWMI), Vientiane, Lao PDR (s.douangsavanh@cgiar.org)
**Ammala Chanthalath**, Research Officer - Participatory Methods, IWMI, Vientiane, Lao PDR (a.chanthalath@cgiar.org)
**Viengxay Xaydala**, National Researcher - Social Science, IWMI, Vientiane, Lao PDR (v.xaydala@cgiar.org)

**Citation**
Khounnouvong, B.; Keovongphet, K.; Douangsavanh, S.; Chanthalath, A.; Xaydala, V. 2024. *Implementation manual for Gender Action Learning System*. In Lao. Colombo, Sri Lanka: International Water Management Institute (IWMI). CGIAR Initiative on Agroecology. 35p.

**Acknowledgments** This work was carried out under the CGIAR Initiative on Agroecology (https://www.cgiar.org/initiative/agroecology/), which is grateful for the support of CGIAR Trust Fund contributors (www.cgiar.org/funders). The authors wish to express gratitude to the initiative team and Alliance Bioversity-CIAT for their continuous technical support during the training sessions and workshop.

**Contact**

Boutsady Khounnouvong (boutsady.kh@gmail.com)
Somphasith Douangsavanh (s.douangsavanh@cgiar.org; spdouangsavanh@yahoo.com)

**Disclaimer**
This publication has been prepared as an output of the CGIAR Initiative on Agroecology and has not been independently peer reviewed. Responsibility for editing, proofreading, and layout, opinions expressed and any possible errors lies with the authors and not the institutions involved.

© 2024 International Water Management Institute (IWMI). All rights reserved.